ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

0035

ເລກທີ:...../PTL/2021

ນະຄອນຫຼວງວຽງຈັນ, ວັນທີ: 18 MAY 2021

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ເມື່ອວັນທີ 07 ພຶດສະພາ 2021 ເວລາ 08:50 ໂມງ ທີ່ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມໃນຕອນເປີດງານທັງໝົດ 11 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 8 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 3 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198.816.290 ຮຸ້ນ, ເທົ່າກັບ 84,60% ຂອງຈຳນວນຮຸ້ນທັງໝົດຂອງ ບໍລິສັດ. ໃນອາລະຫິ 3 ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງມາເພີ່ມອີກຈຳນວນ 1 ທ່ານ, ສະນັ້ນ ໃນກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 12 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 9 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 3 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198.824.790 ຮຸ້ນ, ເທົ່າກັບ 84,61% ຂອງ ຈຳນວນຮຸ້ນທັງໝົດຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ພິທີກອນດຳເນີນກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງທີ່ໄດ້ ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມະຊິກສະພາບໍລິຫານ	**ຕຳແໜ່ງ**
1. ທ່ານ ນາງ ຈັນທະກອມ ເມກສະຫວັນ	: ຮອງປະທານສະພາບໍລິຫານ;
2. ທ່ານ ນາງ ດາລີ ພົນເສນາ	: ສະມາຊິກສະພາບໍລິຫານອິດສະຫຼະ, ປະທານຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
3. ທ່ານ ໂພໄຊ ຈັນທະວົງສາ	: ສະມາຊິກສະພາບໍລິຫານອິດສະຫຼະ, ຄະນະກຳມະການກວດສອບຄວາມສ່ຽງພາຍໃນ;
4. ທ່ານ ບຸນຖົມ ຈິດຕະວົງ	: ສະມາຊິກສະພາບໍລິຫານ.

ສ່ວນ ທ່ານ ຈັນທອນ ສິດທິໄຊ ປະທານສະພາບໍລິຫານ, ທ່ານ ນາງ ສະຫວັນທອງ ພົງສະຫວັນ ຮອງປະທານ ສະພາບໍລິຫານ ແລະ ທ່ານ ໝູພັນ ມະຫາພົນ ສະມາຊິກສະພາບໍລິຫານອິດສະລະ ຕິດພາລະກິດຈຶ່ງບໍ່ສາມາດເຂົ້າຮ່ວມກອງ ປະຊຸມໃນຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ນາງ ຈັນທະຄອມ ເມກສະຫວັນ ຮອງປະທານສະພາບໍລິຫານ ເປັນປະທານກອງ ປະຊຸມໃນຄັ້ງນີ້ແທນ.

ໃນກອງປະຊຸມ, ຍັງມີທ່ານຜູ້ເຂົ້າຮ່ວມຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ຕະຫຼາດຫຼັກຊັບລາວ (ຕລຊລ), ບໍລິສັດ Price Waterhouse Cooper (Lao) Sole Co., Ltd, ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ ແລະ ຜູ້ຖືຮຸ້ນລາຍຍ່ອຍ ໃຫ້ກຽດເຂົ້າຮ່ວມ.

ພິທີກອນໄດ້ແນະນຳ ວິທີການປ້ອງກັນເຊື້ອພະຍາດ Covid 19 ໃນການເຂົ້າຮ່ວມກອງປະຊຸມ ແລະ ແຈ້ງໃຫ້ ບັນດາທ່ານຜູ້ຖືຮຸ້ນຮັບຊາບເຖິງວາລະການປະຊຸມໃນມື້ນີ້ ພ້ອມດ້ວຍວິທີການລົງຄະແນນ ແລະ ການນັບຜົນຄະແນນໃຫ້ທຸກ ທ່ານຮັບຊາບດັ່ງນີ້:

ວາລະການປະຊຸມ:

ວາລະ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019;

ວາລະ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານການ ເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020;

ວາລະ 3. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021;

ວາລະ 4. ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2020;

ວາລະ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ;

ວາລະ 6. ພິຈາລະນາ ແລະ ຮັບຮອງເອົາ ການລາຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ;

ວາລະ 7. ພິຈາລະນາ ແລະ ຮັບຮອງເອົາ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານສະພາບໍລິຫານ ຂອງ ປທລ.

ວິທີການລົງຄະແນນສຽງ:

- ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່;
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ; ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍ ✓ ລົງໃນຊ່ອງ □ບໍ່ເຫັນດີ ໃນບັດລົງຄະແນນ ແລະ ຍົກບັດກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບເອົາບັດລົງຄະແນນ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກ ບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ;
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມ ຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດນັ້ນ ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນ ທີ່ຮຽບຮ້ອຍແລ້ວ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນສຽງໃນກອງປະຊຸມອີກ.

ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ທີ່ອອກສຽງບໍ່ເຫັນດີມາລົບອອກຈາກ ຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກປະທານໄດ້ປະກາດ ໃນກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີຄຳຖາມ ຫຼື ຂໍ້ສະເໜີແນະໃດໆ ໃນແຕ່ລະວາລະລົບກວນທ່ານກະລຸນາຍົກມືຂຶ້ນ ພ້ອມແຈ້ງຊື່, ນາມສະກຸນ ແລະ ສະຖານະວ່າເປັນຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດ ເພື່ອໃຊ້ປະກອບການບັນທຶກໃນບົດລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ແລະ ອີກເທື່ອໜຶ່ງ, ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ຂ້າພະເຈົ້າຂໍອະນຸຍາດແຈ້ງໃຫ້ບັນດາທ່ານຊາບວ່າ: ໃນກອງປະຊຸມມື້ນີ້ບໍ່ອານຸຍາດໃຫ້ຜູ້ສັງເກດການປະກອບຄຳເຫັນ ກ່ຽວກັບວາລະຂອງກອງປະຊຸມ.

ທັງນີ້ເພື່ອໃຫ້ເກີດຄວາມໂປ່ງໃສໃນການນັບຄະແນນສຽງ ຂ້າພະເຈົ້າຂໍລົບກວນອາສາສະມັກຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດຈາກຜູ້ຖືຮຸ້ນຢ່າງໜ້ອຍ 1 ທ່ານມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ໂດຍລົບກວນທ່ານແຈ້ງຊື່, ນາມ ສະກຸນ ແລະ ກະລຸນາແຈ້ງວ່າທ່ານເປັນຜູ້ຖືຮຸ້ນ ຫຼື ຮັບມອບສິດຈາກຜູ້ຖືຮຸ້ນທ່ານໃດ ແລະ ຂໍຮຽນເຊີນທ່ານໄປທີ່ຈຸດນັບຄະແນນເລີຍ. ໃນກອງປະຊຸມມີຜູ້ຖືຮຸ້ນ 1 ທ່ານຄື ທ່ານ ນາງ ມຸກດາໄລ ຄູນສະຫວັນ, ເຊິ່ງເປັນຜູ້ຮັບມອບສິດມາຮ່ວມກອງປະຊຸມ ໄດ້ສະມັກມາຮ່ວມເປັນສັກຂີພະຍານໃນການນັບຄະແນນ ຮ່ວມກັບຄະນະກຳມະການບໍລິສັດ ແລະ ມອບໝາຍໃຫ້ຝ່າຍເລຂານຸການຂອງບໍລິສັດດຳເນີນການຮ່ວມນັບຄະແນນໃນແຕ່ລະວາລະ.

ຫຼັງຈາກນັ້ນ ນາງ ຈັນທະຄອນ ເມກສະຫວັນ ຮອງປະທານສະພາບໍລິຫານ, ເປັນຜູ້ກ່າວເປີດກອງປະຊຸມ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ໂດຍອີງຕາມວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ມີລາຍລະອຽດດັ່ງນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

ທ່ານປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໄດ້ຈັດຂຶ້ນໃນວັນທີ 29 ພຶດສະພາ 2020 ໂດຍບໍລິສັດໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.

ຫຼັງຈາກທ່ານປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.816.290 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.816.290 ສຽງ ຄິດເປັນ 100 %.

ວາລະທີ 2. ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານ ການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບຜົນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2020 ເຊິ່ງມີລາຍລະອຽດດັ່ງນີ້:

I. ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ມີດັ່ງນີ້:

❖ ຍອດຂາຍລູກຄ້າປໍ້ານ້ຳມັນ:

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2020 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ (ລິດ)	ຍອດຂາຍ (ລິດ)	ສ່ວນຕ່າງ ແຜນ-ຍອດຂາຍ	
				(ລິດ)	(%)
1	ປໍ້ານ້ຳມັນ ພລາຕິນຳ	16.113.000	12.991.000	(3.122.000)	(19)
2	ປໍ້ານ້ຳມັນ ໂກລ	23.036.000	21.576.000	(1.460.000)	(6)
3	ປໍ້ານ້ຳມັນ ມາດຕະຖານ	22.553.000	18.443.000	(4.110.000)	(18)
4	ປໍ້ານ້ຳມັນ ທ້ອງຖິ່ນພັດທະນາ	11.597.000	11.137.000	(460.000)	(4)
ລວມ		**73.299.000**	**64.147.000**	**(9.152.000)**	**(12,49)**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2020 ກັບ ຍອດຂາຍປີ 2019

ລ/ດ	ລູກຄ້າ	ຍອດຂາຍ 2020 (ລິດ)	ຍອດຂາຍ 2019 (ລິດ)	ສ່ວນຕ່າງ ຍອດຂາຍ 2019-2020	
				(ລິດ)	(%)
1	ປໍ້ານ້ຳມັນ ພລາຕິນຳ	12.991.000	14.518.000	(1.527.000)	(10,52)
2	ປໍ້ານ້ຳມັນ ໂກລ	21.576.000	24.036.000	(2.460.000)	(10,23)
3	ປໍ້ານ້ຳມັນ ມາດຕະຖານ	18.443.000	17.747.000	696.000	3,92
4	ປໍ້ານ້ຳມັນ ທ້ອງຖິ່ນພັດທະນາ	11.137.000	10.675.000	462.000	4,33
ລວມ		**64.147.000**	**66.976.000**	**(2.829.000)**	**(4,22)**

❖ ยอดขายลูกค้าโครงการ:

1) ตารางเปรียบเทียบยอดขาย ระหว่าง แผนปี 2020 กับ ยอดขายจริง

ลูกค้า	แผน 2020 (ลิตร)	ยอดขาย (ลิตร)	ส่วนต่าง ยอดขาย 2020	
			(ลิตร)	(%)
ลูกค้าโครงการ/B2B	114.140.000	84.575.000	(29.565.000)	(25,90)

2) ตารางเปรียบเทียบยอดขาย ระหว่าง ยอดขายปี 2020 กับ ยอดขายปี 2019

ลูกค้า	ยอดขาย 2020 (ลิตร)	ยอดขาย 2019 (ลิตร)	ส่วนต่าง ยอดขาย 2019-2020	
			(ลิตร)	(%)
ลูกค้าโครงการ/B2B	84.575.000	102.357.000	(17.782.000)	(17,37)

❖ ยอดขายน้ำมันเตา, ยางมหาดอย และ น้ำมันเครื่อง

1) ตารางเปรียบเทียบยอดขาย ระหว่าง แผนปี 2020 กับ ยอดขายจริง

ล/ด	ลูกค้า	แผน 2020 (ลิตร)	ยอดขาย 2020 (ลิตร)	ส่วนต่าง แผน-ยอดขาย 2020	
				(ลิตร)	(%)
1	ลูกค้าน้ำมันเตา	ตามการสั่งซื้อของ ลูกค้า	6.759.375	6.759.375	100
2	ยางมหาดอย	ตามการสั่งซื้อของ ลูกค้า	19.003.187	19.003.187	100
3	น้ำมันเครื่อง	120.000	12.298	(107.702)	(89,75)
รวม		**120.000**	**25.774.860**	**25.654.860**	**213,79**

2) ตารางเปรียบเทียบยอดขาย ระหว่าง ยอดขายปี 2020 กับ ยอดขายปี 2019

ล/ด	ลูกค้า	ยอดขาย 2020 (ลิตร)	ยอดขาย 2019 (ลิตร)	ส่วนต่าง ยอดขาย 2019-2020	
				(ลิตร)	(%)
1	ลูกค้าน้ำมันเตา	6.759.375	N/A	6.759.375	100
2	ยางมหาดอย	19.003.187	N/A	19.003.187	100
3	น้ำมันเครื่อง	12.298	10.335	1.963	18,99
รวม		**25.774.860**	**10.335**	**25.764.525**	**218,99**

❖ ຕາຕະລາງປຽບທຽບລູກຄ້າທັງໝົດ

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2020 ກັບ ຍອດຂາຍປີ 2020

ລ/ດ	ລູກຄ້າ	ແຜນ 2020 (ລິດ)	ຍອດຂາຍ 2020 (ລິດ)	ສ່ວນຕ່າງ ແຜນ-ຍອດຂາຍ 2020	
				(ລິດ)	(%)
1	ລູກຄ້າໂຄງການ/B2B	114.140.000	84.575.000	(29.565.000)	(25,90)
2	ລູກຄ້າປ໊ຳນ້ຳມັນ	73.299.000	64.147.000	(9.152.000)	(12,49)
3	ລູກຄ້ານ້ຳມັນເຕົາ ແລະ ຢາງໝາກຕອຍ	ຕາມການສັ່ງຊື້ຂອງລູກຄ້າ	25.762.562	25.762.562	100
4	ລູກຄ້ານ້ຳມັນເຄື່ອງ	120.000	12.298	(107.702)	(89,75)
ລວມ		**187.559.000**	**174.496.860**	**(13.062.140)**	**(6,96)**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2020 ກັບ ຍອດຂາຍ 2019

ລ/ດ	ລູກຄ້າ	ຍອດຂາຍ 2020 (ລິດ)	ຍອດຂາຍ 2019 (ລິດ)	ສ່ວນຕ່າງ ຍອດຂາຍ 2019-2020	
				(ລິດ)	(%)
1	ລູກຄ້າໂຄງການ/B2B	84.575.000	102.357.000	(17.782.000)	(17,37)
2	ລູກຄ້າປ໊ຳນ້ຳມັນ	64.147.000	66.976.000	(2.829.000)	(4,22)
3	ລູກຄ້ານ້ຳມັນເຕົາ ແລະ ຢາງໝາກຕອຍ	25.762.562	N/A	25.762.562	N/A
4	ລູກຄ້ານ້ຳມັນເຄື່ອງ	12.298	10.335	1.963	18,99
ລວມ		**174.496.860**	**169.343.335**	**5.153.525**	**3%**

❖ ການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ ປະຈຳປີ 2020

ລ/ດ	ລາຍການ	2019 (ກີບ)	2020 (ກີບ)	ສ່ວນຕ່າງ 2019-2020	
				(ກີບ)	(%)
1	ພາສີນຳເຂົ້ຳ	43.299.752.000	30.770.033.800	(12.529.718.200)	(28,94)
2	ອາກອນຊົມໃຊ້	174.210.011.500	104.651.811.900	(69.558.199.600)	(39,93)
3	ອາກອນມູນຄ່າເພີ່ມ	162.358.934.899	56.457.764.899	(105.901.170.000)	(65,23)
4	ຄ່າບຸລະນະທາງ	88.338.640.000	76.018.280.000	(12.320.360.000)	(13,95)
5	ຄັງແຮ	80.734.800.000	195.899.410.000	115.164.610.000	58,79
6	E-Meter	1.019.292.000	877.134.000	(142.158.000)	(13,95)
7	ກວດກາຄຸນນະພາບ	2.717.812.000	2.339.024.000	(378.788.000)	(13,94)
8	ອມພ ເພີ່ມພາຍໃນປີ	15.826.873.767	61.466.531.998	45.639.658.231	74,25

9	ອາກອນກຳໄລ	800.000.000	2.870.718.065	2.070.718.065	72,13
10	ອາກອນເງິນເດືອນ	1.251.753.473	880.770.879	(370.982.594)	(29,63)
ລວມ		**570.557.869.639**	**532.231.479.541**	**(38.326.390.098)**	**(6,72)**

❖ ບຸກຄະລາກອນ

ການດຳເນີນງານດ້ານບຸກຄະລາກອນ ປະຈຳປີ 2020 ຜ່ານມາແມ່ນເນັ້ນໃສ່ການຮັບປະກັນຄວາມພຽງພໍ ຂອງ ພະນັກງານ, ການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເບິ່ງແຍງສະຫວັດດີການຂອງ ພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວາງອອກ .ນອກນີ້ກໍຍັງໄດ້ຈັດໃຫ້ມີການຝຶກ ອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍໃນອົງກອນ .

ບໍລິສັດ ປີໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ມີຈຳນວນພະນັກງານ ປະຈຳປີ 2020 ມີຈຳນວນ 56 ຄົນ, ໃນນັ້ນມີ ເພດຍິງຈຳນວນ 35 ຄົນ.

II. ເອກະສານລາຍງານການເງິນ ປະຈຳປີ 2020 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ລາຍການ	2020	2019	ສ່ວນຕ່າງ	%
ຊັບສິນທັງໝົດ (ກີບ)	781.156.921.782	753.368.200.898	27.788.720.884	3,69
ໜີ້ສິນທັງໝົດ (ກີບ)	571.010.773.835	520.790.867.043	50.219.906.792	9,64
ສ່ວນຂອງຜູ້ຖືຮຸ້ນ (ກີບ)	210.146.147.947	232.577.333.855	(22.431.185.908)	(9,64)
ລາຍຮັບທັງໝົດ (ກີບ)	1.129.058.388.481	1.271.935.934.055	(142.877.545.574)	(11,23)
ກຳໄລ/(ຂາດທຶນ) ສຸດທິ (ກີບ)	(22.431.185.908)	(80.237.966.665)	57.806.780.757	(72,04)
ກຳໄລສຸດທິຕໍ່ຮຸ້ນ	(96)	(342)	246	(71.93)

ສ່ວນລາຍລະອຽດເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ພາຍນອກແມ່ນຕາມເອກະສານຄັດຕິດໃນກອງປະຊຸມ.

ຫຼັງຈາກທ່ານປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດ ເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.816.290 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.816.290 ສຽງ ຄິດເປັນ 100 %.

ວາລະທີ 3. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2021

ທ່ານ ປະທານກອງປະຊຸມ ໄດ້ມອບເວທີໃຫ້ ທ່ານ Mark LUVANT ຜູ້ຈັດການທົ່ວໄປ ຂອງ ປທລ ລາຍງານຕໍ່ກອງປະຊຸມກ່ຽວກັບແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ມີດັ່ງນີ້:

ໃນປີ 2021 ຈະເປັນປີທີ່ມີຄວາມທ້າທາຍຄັ້ງໃຫຍ່ ສຳລັບບໍລິສັດ ເນື່ອງຈາກພວກເຮົາຈະຕ້ອງໄດ້ປັບປຸງຕົວເອງຈາກການດຳເນີນທຸລະກິດທີ່ຂາດທຶນໃນປີ 2020 ແລະ ຕ່ຳຈຳນວນຍອດຂາຍທີ່ຫາຍໄປຈາກ ໂຄງການທາງດ່ວນ ວັງວຽງ-ຫຼວງພະບາງ ໄລຍະ 2 ເຊິ່ງຈະມີການດຳເນີນໂຄງການໃນທ້າຍປີ 2021 ຫຼື ຕົ້ນປີ 2022. ດັ່ງນັ້ນ, ບໍລິສັດຈຶ່ງຕັດສິນໃຈນຳໃຊ້ຍຸດທະສາດທາງການຕະຫຼາດເຊີງລຸກ ແລະ ມີຄວາມເໝາະສົມຫຼາຍຂຶ້ນ ລວມທັງຍຸດທະສາດທາງການຕະຫຼາດພາຍໃນປະເທດອີກດ້ວຍ.

1. ການຂະຫຍາຍຕົວ - ຊົດເຊີຍຄວາມເສຍຫາຍໃນປີ 2020

I. ໂຄງການ B2B

- ເພີ່ມປະລິມານການສະໜອງນ້ຳມັນໃຫ້ຫຼາຍຂຶ້ນ ໂດຍໃຊ້ປະໂຫຍດຈາກຄວາມໄດ້ປຽບດ້ານອຸປະທານ ແລະ ໂລຈິສຕິກຂອງບໍລິສັດ (ທຽບກັບຜູ້ນຳເຂົ້າລາຍອື່ນ) ພ້ອມກັບການປະຕິບັດຕາມກົດລະບຽບຂອງລັດຖະບານ;
- ເພີ່ມຖານລູກຄ້າໃນຮູບແບບ B2B ໃຫ້ຫຼາຍຂຶ້ນ (ໂດຍສະເພາະແມ່ນ ກຸ່ມລູກຄ້າຂຸດຄົ້ນບໍ່ແຮ່);
- ເພີ່ມການຂາຍແບບ spot market ໃຫ້ໄດ້ປະມານ 45ລ້ານລິດ.

II. ການຂາຍຍ່ອຍ

- ເພີ່ມປະລິມານການສະໜອງນ້ຳມັນໃຫ້ກັບລູກຄ້າປະຈຸບັນໃຫ້ຫຼາຍຂຶ້ນ ແລະ ລູກຄ້າ COCO ລາຍໃໝ່ທີ່ຫາມາໄດ້.
- ປັບປຸງພາບລັກ ແລະ ເພີ່ມມູນຄ່າໃຫ້ກັບທຸລະກິດນ້ຳມັນ ແລະ ທຸລະກິດຮ້ານສະດວກຊື້ໃນປ້ຳນ້ຳມັນ ເພື່ອໃຫ້ມີກຳໄລ ແລະ ປະລິມານການຂາຍເພີ່ມຂຶ້ນ :
  - ສົ່ງເສີມໃຫ້ລູກຄ້ານຳໃຊ້ການເຕີມນ້ຳມັນດ້ວຍບັດ ພລັສຄາດ;
  - ພັດທະນາຊ່ອງທາງການຊ່ອງທາງການຈຳໜ່າຍ ນ້ຳມັນເຄື່ອງໃຫ້ໄດ້ 10 ຮ້ານ;
  - ພັດທະນາຮ້ານກາເຟ (5) .

III. ການຕະຫຼາດ ແລະ ການສົ່ງເສີມການຂາຍ

- ເພີ່ມກຳໄລໃຫ້ຫຼາຍຂຶ້ນ ໂດຍການຫຼຸດຕົ້ນທຶນ;
- ສືບຕໍ່ຕິດຕາມ ແລະ ຮ່ວມມືກັບບັນດາບໍລິສັດອຸດສາຫະກຳ ເພື່ອຮັກສາສ່ວນແບ່ງທາງການຕະຫຼາດ/ຫຼຸດຄ່າໃຊ້ຈ່າຍດ້ານຕົ້ນທຶນ, ປະກັນໄພ ແລະ ການຂົນສົ່ງສິນຄ້າ.

2. ປະສິດທິພາບທາງດ້ານການດຳເນີນງານ

i) ສືບຕໍ່ບໍລິຫານຈັດການຄ່າໃຊ້ຈ່າຍດ້ານການດຳເນີນງານ ແລະ ຄ່າໃຊ້ຈ່າຍດ້ານການລົງທຶນໃຫ້ມີປະສິດທິພາບ ໂດຍການດັດປັບໂຄງສ້າງ ແລະ ການລົງທຶນຂອງບໍລິສັດ ໃຫ້ໄດ້ຜົນຕອບແທນໄວທີ່ສຸດ;

ii) ປັບປຸງປະສິດທິພາບໃນການດຳເນີນງານຄືນໃໝ່, ຂະຫຍາຍສາງນ້ຳມັນໃຫ້ສາມາດບັນຈຸປະລິມານນ້ຳມັນໄດ້ຫຼາຍຂຶ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ເພື່ອຫຼຸດຜ່ອນການລົງທຶນໃນການຂະຫຍາຍສາງນ້ຳມັນ.

3. ນະໂຍບາຍທາງດ້ານການເງິນ

i) ຫຼຸດອັດຕາສ່ວນລູກໜີ້ການຄ້າຂອງບໍລິສັດໃນປີ 2020 ໃຫ້ເຫຼືອ 0;

ii) ຫຼຸດຜ່ອນຄວາມສ່ຽງສິນເຊື່ອເບີກເກີນບັນຊີຂອງບໍລິສັດ ກັບບັນດາຜູ້ສະໜອງ;

iii) ບໍລິຫານ ຄວາມສ່ຽງດ້ານສິນເຊື່ອຂອງການຂາຍແບບ spot market;

iv) ຫຼຸດຄວາມສ່ຽງ ການຂາດທຶນຈາກອັດຕາແລກປ່ຽນ ໃຫ້ເຫຼືອ 0.

4. ວັດທະນະທຳອົງກອນ

i) ສົ່ງເສີມພະນັກງານທີ່ມີປະສິດທິພາບສູງ ໄປສູ່ບົດບາດໜ້າວຽກທີ່ທ້າທາຍຍິ່ງຂຶ້ນ;

ii) ພັດທະນາຂີດຄວາມສາມາດຂອງພະນັກງານ, ສົ່ງເສີມການກ້າວຂ້າມໄປສູ່ການປ່ຽນແປງ ແລະ ຝຶກອົບຮົມໜ້າວຽກໃນສາຍງານອື່ນ.

iii) ຊຸກຍູ້ໃຫ້ມີການຄິດຄົ້ນນະວັດຕະກຳໃໝ່ໆ.

❖ ປັດໃຈພາຍນອກໃນປີ 2020

1. ອັດຕາແລກປ່ຽນ

ໃນຊ່ວງເດືອນ ມັງກອນ ຫາ ພຶດສະພາ 2020 ພວກເຮົາໄດ້ປະສົບກັບບັນຫາຂາດທຶນເປັນສ່ວນໃຫຍ່ ເນື່ອງຈາກອັດຕາແລກປ່ຽນຈາກເງິນກີບ ເປັນ ໂດລາ ທີ່ເປັນລົບໃນປີນີ້. ເຄິ່ງປີຫຼັງໃນເດືອນ ມິຖຸນາ ຫາ ທັນວາ ພວກເຮົາຈະໄດ້ຮັບຜົນດີຈາກລູກໜີ້ການຄ້າ ແລະ ໃນຊ່ວງນັ້ນຄ່າເງິນໂດລາອ່ອນຄ່າລົງຫຼາຍໃນຕະຫຼາດຕ່າງປະເທດ ໃນຂະນະທີ່ຄ່າຂອງເງິນຢວນເລີ່ມແຂງຕົວ ເຮົາສາມາດໃຊ້ປະໂຫຍດຈາກສິ່ງນີ້ໄດ້ ເນື່ອງຈາກເຮົາກຳນົດລາຄາຂອງສິນຄ້າເປັນເງິນຢວນ (ຮັບເງິນຈາກລູກໜີ້ເປັນເງິນຢວນ) ໃນຂະນະທີ່ຊຳລະຄ່າສິນຄ້າເປັນເງິນໂດລາ.

2. ການແຜ່ລະບາດຂອງເຊື້ອພະຍາດ Covid 19

ຜົນກະທົບຂອງເຊື້ອພະຍາດ Covid 19 ແລະ ສົງຄາມລາຄານ້ຳມັນກຳລັງພິສູດໃຫ້ເຫັນວ່າເປັນວິກິດສອງດ້ານສຳລັບບໍລິສັດ ລາຄານ້ຳມັນເຊື້ອໄຟ, ເຄມີພັນ ແລະ ລາຄານ້ຳມັນລົດລົງເນື່ອງຈາກຂໍ້ຕົກລົງທີ່ລົ້ມເຫຼວໃນການຫຼຸດກຳລັງການຜະລິດ, ຄວາມຕ້ອງການສານເຄມີ ແລະ ໂຮງກັ່ນນ້ຳມັນກຳລັງສະລໍຕົວ ເນື່ອງຈາກບາງອຸດສາຫະກຳມີການຊະລໍການຜະລິດ ແລະ ມີຂໍ້ຈຳກັດໃນການເດີນເດີນທາງຫຼັງຈາກມີການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວ.

ຫຼັງຈາກທ່ານ ທ່ານ Mark LUVANT ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ແລ້ວ ກໍໄດ້ມອບເວທີຄືນໃຫ້ ທ່ານ ປະທານກອງປະຊຸມ ແລະ ທ່ານກໍເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ທ່ານປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງ ບໍລິສັດປະຈຳປີ 2021.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດປະ ຈຳປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.824.790 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ວາລະທີ 4. ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2020

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມເອກະສານລາຍງານການເງິນທີ່ຜ່ານການກວດສອບ ພາຍນອກ ປະຈຳປີ 2020 ບໍລິສັດຂາດທຶນໃນການດຳເນີນທຸລະກິດ ແລະ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155"ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີການຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການບໍ່ໃຫ້ມີການປັນຜົນ ຈາກຜົນການດຳ ເນີນທຸລະກິດປະຈຳປີ 2020.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາການບໍ່ໃຫ້ມີການປັນຜົນ ຈາກຜົນການດຳ ເນີນທຸລະກິດປະຈຳປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.824.790 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ວາລະທີ 5. ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະ ຊຸມ ສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາ ເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2021 ໂດຍກຳນົດຄ່າຈ້າງຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ, PWC ເປັນບໍລິສັດກວດສອບບັນຊີພາຍ ນອກທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບ ບັນຊີພາຍນອກແຕ່ປີ 2017 ຫາ 2020 ເຫັນວ່າ PWC ມີປະສົບການ, ມີຄວາມລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ
2017	55.000
2018	55.000
2019	34.000
2020	34.000
2021	34.000 - 37.000

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍ ນອກຄື ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ ລະຫວ່າງ 34.000 ຫາ 37.000 ໂດລາສະຫະລັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມດັ່ງນີ້:

- ເຫັນດີ 198.824.790ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ວາລະທີ 6. ພິຈາລະນາ ແລະ ຮັບຮອງເອົາ ການລາຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ເນື່ອງຈາກ ທ່ານ ຈັນທອນ ສິດທິໄຊ ໄດ້ໄປຮັບຜິດຊອບໜ້າທີ່ອື່ນເຊິ່ງບໍ່ມີຄວາມສະດວກໃນການດຳລົງຕຳແໜ່ງຕໍ່ໄປ ຈຶ່ງລາອອກຈາກຕຳແໜ່ງ ປະທານສະພາບໍລິຫານຂອງ ປທລ.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການລາຈາກຕຳແໜ່ງ ປະທານສະພາ ບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາການລາຈາກຕຳແໜ່ງ ປະທານສະພາ ບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມດັ່ງນີ້:

- ເຫັນດີ 198.824.790ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ວາລະທີ 7. ພິຈາລະນາ ແລະ ຮັບຮອງເອົາ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານສະພາບໍລິຫານ ຂອງ ປທລ

ທ່ານ ປະທານກອງປະຊຸມ ໄດ້ລາຍງານຕໍ່ທີ່ປະຊຸມ: ເນື່ອງຈາກ ທ່ານ ປະທານສະພາບໍລິຫານຄົນເກົ່າ ໄດ້ລາອອກ ໄປຮັບຜິດຊອບໜ້າທີ່ອື່ນ ຈຶ່ງແຕ່ງຕັ້ງ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານສະພາບໍລິຫານ ຄົນໃໝ່.

ຫຼັງຈາກປະທານກອງປະຊຸມ ໄດ້ລາຍງານໃນວາລະນີ້ແລ້ວກໍ່ໄດ້ເປີດໂອກາດຮຽນເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ໃຫ້ສອບຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານສະພາບໍລິຫານ ຂອງ ປທລ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາ ທ່ານ ຫວ່າງ ຣັຕະນະວົງ ມາເປັນ ປະທານ ສະພາບໍລິຫານ ຂອງ ປທລ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.824.790 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ປະທານກອງປະຊຸມໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບວ່າ ກອງປະຊຸມໄດ້ຮັບການພິຈາລະນາ ແລະ ອະນຸມັດຄົບຖ້ວນທຸກ ວາລະຕາມໜັງສືເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແລະ ສອບຖາມຕື່ມ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ນາງ ຈັນທະດອມ ເມກສະຫວັນ ປະທານກອງປະຊຸມ ໄດ້ກ່າວໃນນາມສະພາ ບໍລິຫານຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ຂອບໃຈບັນດາຜູ້ຖືຮຸ້ນ ແລະ ຜູ້ຮັບມອບສິດ ທຸກທ່ານ ທີ່ໄດ້ ສະລະເວລາມາຮ່ວມປະຊຸມໃນມື້ນີ້ ແລະ ຂອບໃຈ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ແລະ ຜູ້ທີ່ກ່ຽວຂ້ອງທຸກພາກສ່ວນ ທີ່ໃຫ້ກຽດເຂົ້າຮ່ວມກອງປະຊຸມໃນມື້ນີ້ ເຮັດ ໃຫ້ການປະຊຸມມື້ນີ້ສຳເລັດໄປໄດ້ດ້ວຍດີ.

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆຕື່ມອີກ ດັ່ງນັ້ນ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມເວລາ 10:10 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທະດອມ ເມກສະຫວັນ
Chanthadom MEKSAVANH

ໝາຍເຫດ: ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ໃຫ້ເອົາສະບັບພາສາລາວເປັນຫຼັກ.